## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

---

**ສຳນັກງານນາຍົກລັດຖະມົນຕີ**

ເລກທີ 375 /ນຍ

ນະຄອນຫຼວງວຽງຈັນ, ວັນທີ ໒໒ ຕຸລາ 2007

# ດຳລັດ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ອົງການໄປສະນີ ແລະ ໂທລະຄົມມະນາຄົມແຫ່ງຊາດ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສ.ປ.ປ. ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມ ໃບສະເໜີ ຂອງ ຄະນະຮັບຜິດຊອບກະກຽມ ແລະ ດຳເນີນການສ້າງຕັ້ງອົງການໄປສະນີ ແລະ ໂທລະຄົມມະນາຄົມແຫ່ງຊາດ ແລະ ການເຫັນດີເປັນເອກພາບ ຂອງ ຄະນະປັບປຸງອົງການຈັດຕັ້ງລັດ;
- ອີງຕາມ ໃບສະເໜີ ຂອງ ທ່ານລັດຖະມົນຕີ ປະຈຳ ສຳນັກງານນາຍົກລັດຖະມົນຕີ, ຫົວໜ້າທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ສະບັບເລກທີ 100 /ທປຄ.ກພລ, ລົງວັນທີ 17 ຕຸລາ 2007.

**ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ. ລາວ ອອກດຳລັດ:**

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ນິຍາມຄຳສັບ**

ຕາມກົດໝາຍວ່າດ້ວຍການໄປສະນີ ແລະ ກົດໝາຍວ່າດ້ວຍໂທລະຄົມມະນາຄົມ ໄດ້ຈຳກັດຄວາມໝາຍ ຂອງ ບັນດາຄຳສັບໄວ້ດັ່ງລຸ່ມນີ້:

1. **ການໄປສະນີ**: ແມ່ນການບໍລິການຮັບຝາກ, ການຈັດສົ່ງ, ການແຈກຢາຍໄປສະນີພັນ, ພັດສະດຸໄປສະນີ ໂດຍມີການຕິດສະແຕັມ ແລະ ມີກາປະທັບຂອງໄປສະນີ; ການບໍລິການໄປສະນີກ່ຽວກັບການສົ່ງຂ່າວທາງໂທລະເລກ, ໂທລະສານ ແລະ ທາງເອເລັກໂຕຣນິກ; ການບໍລິການ

ດ້ານການເງິນໄປສະນີ, ການຂະຫຍາຍສະແຕັມໄປສະນີ ແລະ ຜະລິດຕະພັນໄປສະນີປະເພດຕ່າງໆ ໂດຍມີການຄິດໄລ່ເອົາການບໍລິການ ຕາມການຕົກລົງຂອງລັດຖະບານ;

2. **ການໂທລະຄົມມະນາຄົມ:** ແມ່ນການສົ່ງ ແລະ ການຮັບຂໍ້ມູນຂ່າວສານ, ສຽງ, ຮູບພາບ, ຕົວເລກ, ຕົວອັກສອນ, ເຄື່ອງໝາຍຢູ່ພາຍໃນ ແລະ ລະຫວ່າງປະເທດ ຜ່ານສາຍທອງ, ສາຍໂລຫະປະສົມ, ສາຍກາບໃຍແສງ, ຄື້ນແມ່ເຫຼັກໄຟຟ້າ, ຄື້ນຄວາມຖີ່ວິທະຍຸ ແລະ ອື່ນໆ;
3. **ຂໍ້ມູນຂ່າວສານ:** ແມ່ນສັນຍານເປັນລະຫັດ ຫຼື ສຽງ, ຮູບພາບ, ຕົວເລກ, ເຄື່ອງໝາຍ ທີ່ມີຄວາມໝາຍ ໃຫ້ເຂົ້າໃຈເຊິ່ງກັນ ແລະ ກັນ ລະຫວ່າງການຮັບ-ສົ່ງ;
4. **ການສື່ສານ:** ແມ່ນການຮັບ-ສົ່ງຂໍ້ມູນຂ່າວສານ ຜ່ານຕາໜ່າງໂທລະຄົມ ຈາກຈຸດໜຶ່ງໄປຫາຈຸດໜຶ່ງ ຫຼື ຫຼາຍຈຸດ;
5. **ເຕັກໂນໂລຊີ:** ແມ່ນການໃຊ້ຄວາມຮູ້ທາງດ້ານວິທະຍາສາດ ມາພັດທະນາ ເປັນເຄື່ອງຈັກ, ເຄື່ອງມື ແລະ ອຸປະກອນຕ່າງໆ ທີ່ທັນສະໄໝ ເພື່ອຈະທຳການຜະລິດ, ການຄຸ້ມຄອງ ໃຫ້ມີປະສິດທິພາບສູງຂຶ້ນ;
6. **ເຕັກໂນໂລຊີຂ່າວສານ (ໄອທີ):** ແມ່ນເຕັກໂນໂລຊີ ທີ່ນຳໃຊ້ເຂົ້າໃນວຽກງານການບັນທຶກຂໍ້ມູນຂ່າວສານ, ການວິເຄາະວິໄຈ, ການປະເມີນຜົນ, ການຜະລິດ, ການຄຸ້ມຄອງ ເພື່ອເຊື່ອມໂຍງເຂົ້າລະບົບສື່ສານໂທລະຄົມມະນາຄົມ ໃຫ້ຖືກຕ້ອງຕາມຈຸດປະສົງ ແລະ ເປົ້າໝາຍ;
7. **ເຕັກໂນໂລຊີສື່ສານ-ຂ່າວສານ (ໄອຊີທີ):** ແມ່ນເຕັກໂນໂລຊີຮັບໃຊ້ແກ່ການສື່ສານ-ຂໍ້ມູນຂ່າວສານ ທີ່ຜ່ານເຄືອຂ່າຍຕາໜ່າງໂທລະຄົມມະນາຄົມ ໃຫ້ໄປຕາມຈຸດປະສົງຂອງຜູ້ຊົມໃຊ້;
8. **ຮາດແວ:** ແມ່ນອຸປະກອນເອເລັກໂຕຣນິກຕ່າງໆ ເຊັ່ນ: ສູນກາງໂທລະສັບ, ຄອມພິວເຕີ້ ແລະ ອື່ນໆ;
9. **ຊອບແວ:** ແມ່ນໂປຣແກມຄຳສັ່ງສຳເລັດຮູບ ເພື່ອບັນຊາຮາດແວ, ລະບົບເຕັກໂນໂລຊີສື່ສານ-ຂ່າວສານ ໃຫ້ເຄື່ອນໄຫວ ຕາມຈຸດປະສົງຂອງຜູ້ຜະລິດ ແລະ ຜູ້ນຳໃຊ້;
10. **ຊັບພະຍາກອນໂທລະຄົມມະນາຄົມ:** ແມ່ນຄື້ນຄວາມຖີ່, ເລກລະຫັດໂທລະຄົມມະນາຄົມ, ຕຳແໜ່ງວົງໂຄຈອນດາວທຽມ ລວມທັງໂຄງລ່າງພື້ນຖານໂທລະຄົມມະນາຄົມ;
11. **ເລກລະຫັດໂທລະຄົມມະນາຄົມ:** ແມ່ນເລກໝາຍ, ຕົວອັກສອນ ຫຼື ສັນຍານອື່ນໆ ທີ່ບົ່ງບອກທີ່ຕັ້ງ ແລະ ຈຸດຜ່ານໃນຕາໜ່າງໂທລະຄົມມະນາຄົມ ຢູ່ຕົ້ນທາງ ແລະ ປາຍທາງ ພາຍໃນປະເທດ ແລະ ຕ່າງປະເທດ;
12. **ໂຄງລ່າງພື້ນຖານໂທລະຄົມມະນາຄົມ:** ໝາຍເຖິງອາຄານ, ສິ່ງປຸກສ້າງ ພ້ອມດ້ວຍອຸປະກອນ ແລະ ການສົ່ງສັນຍານ ເພື່ອຊ່ວຍໜູນໃຫ້ການບໍລິການຕາໜ່າງໂທລະຄົມມະນາຄົມເຊັ່ນ: ທໍ່ສົ່ງສາຍ, ເສົາເບັ່ງສາຍ, ເສົາໂທລະຄົມມະນາຄົມ, ສາຍອາກາດ, ສາຍກາບໃຍແສງ, ສາຍທອງແດງ, ສາຍສັນຍານໂທລະຄົມມະນາຄົມ ແລະ ອື່ນໆ;
13. **ອຸປະກອນໂທລະຄົມມະນາຄົມ:** ໝາຍເຖິງເຄື່ອງຈັກໂທລະຄົມມະນາຄົມຕ່າງໆ ເຊັ່ນ: ສູນກາງໂທລະສັບ, ໜ່ວຍໂທລະສັບ, ເຄື່ອງສົ່ງ ແລະ ຮັບວິທະຍຸ, ເຄື່ອງຈັກໂທລະເລກ, ເຄື່ອງຈັກໂທລະພິມ, ເຄື່ອງຈັກໂທລະສານ, ເຄື່ອງຄອມພິວເຕີ້, ເຄື່ອງຫຼໍ່ລ້ຽງໄຟຟ້າ ແລະ ສິ່ງທີ່ພົວພັນ

ອື່ນໆ ລວມທັງສາຍທອງ, ສາຍໂລຫະປະສົມ, ສາຍກາບໄຍແສງ, ສາຍອາກາດ ຫຼື ວັດຖຸ ນຳໃຊ້ເຂົ້າໃນການເຊື່ອມຕໍ່ກັບລະບົບຕາໜ່າງໂທລະຄົມມະນາຄົມ;

14. **ອຸປະກອນປາຍທາງ:** ໝາຍເຖິງອຸປະກອນໂທລະຄົມມະນາຄົມທີ່ຜູ້ໃຊ້ການບໍລິການນຳໃຊ້ ເຊັ່ນ: ໜ່ວຍໂທລະສັບມີສາຍ ຫຼື ບໍ່ມີສາຍ, ໜ່ວຍໂທລະສານ, ໜ່ວຍຄອມພິວເຕີ້, ບັນດາອຸປະກອນທີ່ເປັນສ່ວນປະກອບ ແລະ ລະບົບສາຍພາຍໃນ ຊຶ່ງເປັນກຳມະສິດຂອງຜູ້ໃຊ້ການບໍລິການ;
15. **ຕາໜ່າງໂທລະຄົມມະນາຄົມ:** ໝາຍເຖິງລະບົບລວມສູນຂອງໂຄງລ່າງພື້ນຖານໂທລະຄົມມະນາຄົມ ປະກອບດ້ວຍລະບົບທີ່ມີສາຍ ແລະ ບໍ່ມີສາຍ ຫຼື ທັງສອງລະບົບເຊື່ອມຕໍ່ເຂົ້າກັນ ລວມທັງບັນດາອຸປະກອນເຂົ້າໃນການບໍລິການໂທລະຄົມມະນາຄົມ ປະເພດໜຶ່ງ ຫຼື ຫຼາຍປະເພດ;
16. **ອິນເຕີເນັດ:** ແມ່ນການເຊື່ອມຕໍ່ບັນດາລະບົບຕາໜ່າງຄອມພິວເຕີ້ຕ່າງໆ ໃນທົ່ວໂລກໂດຍຜ່ານຕາໜ່າງໂທລະຄົມມະນາຄົມ ເພື່ອການສົ່ງ, ການຮັບ ແລະ ການແລກປ່ຽນຂໍ້ມູນຂ່າວສານຕ່າງໆ;
17. **ລະຫັດອິນເຕີເນັດສູງສຸດຂອງປະເທດ:** ແມ່ນອັກສອນຫຍໍ້ທີ່ອີງການອິນເຕີເນັດສາກົນ ໄດ້ກຳນົດໃຫ້ສະເພາະແຕ່ລະປະເທດນຳໃຊ້ເປັນລະຫັດສູງສຸດ ເພື່ອຄວາມສະດວກໃນການຈຳແນກປະເທດໃນລະບົບອິນເຕີເນັດ;
18. **ຄື້ນຄວາມຖີ່:** ໝາຍເຖິງການກະຈາຍຄື້ນແມ່ເຫຼັກໄຟຟ້າໃນຍ່ານຄວາມຖີ່ ລະຫວ່າງ 3 ກີໂລເຮີດ ເຖິງ 3000 ຈີກາເຮີດ ເພື່ອນຳໃຊ້ໃນການຕິດຕໍ່ສື່ສານ ຫຼື ການສົ່ງ ແລະ ການຮັບຂໍ້ມູນຂ່າວສານ;
19. **ຕຳແໜ່ງວົງໂຄຈອນດາວທຽມ:** ໝາຍເຖິງຕຳແໜ່ງຂອງໜ່ວຍ ຫຼື ສະຖານີດາວທຽມປະຈຳທີ່ ຫຼື ເຄື່ອນທີ່ ແລະ ວົງໂຄຈອນສຳລັບໜ່ວຍ ຫຼື ສະຖານີດາວທຽມຢູ່ໃນຮ່ວງອາວະກາດ;
20. **ສະຖານີວິທະຍຸຕິດຕໍ່ສື່ສານ:** ທີ່ໄດ້ຮັບການອະນຸຍາດ ຈາກ ກະຊວງໂຍທາທິການ ແລະ ການຂົນສົ່ງ ໃຫ້ຕິດຕັ້ງຂຶ້ນ ແລະ ນຳໃຊ້ຄື້ນຄວາມຖີ່ ເພື່ອການຕິດຕໍ່ສື່ສານສະເພາະວຽກງານຂອງການຈັດຕັ້ງໃດໜຶ່ງ;
21. **ການເຊື່ອມຕໍ່ຕາໜ່າງ:** ໝາຍເຖິງການເຊື່ອມຕໍ່ລະຫວ່າງຕາໜ່າງຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມຕ່າງໆ ເພື່ອໃຫ້ຜູ້ໃຊ້ການບໍລິການຂອງຕາໜ່າງເຫຼົ່ານັ້ນ ສາມາດຕິດຕໍ່ສື່ສານກັນໄດ້;
22. **ຜູ້ໃຫ້ການບໍລິການ:** ໝາຍເຖິງນິຕິບຸກຄົນທີ່ໄດ້ຮັບການອະນຸຍາດ ໃຫ້ສ້າງຕັ້ງວິສາຫະກິດດຳເນີນການບໍລິການໂທລະຄົມມະນາຄົມ;
23. **ຜູ້ໃຊ້ບໍລິການ:** ໝາຍເຖິງບຸກຄົນ ຫຼື ການຈັດຕັ້ງທີ່ໃຊ້ການບໍລິການໂທລະຄົມມະນາຄົມ;
24. **ການບໍລິການຕໍ່:** ໝາຍເຖິງການໃຫ້ບໍລິການດ້ານໂທລະຄົມມະນາຄົມອີກຕໍ່ໜຶ່ງໃຫ້ແກ່ຜູ້ໃຊ້ບໍລິການ.

**ມາດຕາ 2. ຈຸດປະສົງ**

ດຳລັດສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ລະບອບແບບແຜນວິທີເຮັດວຽກ ຂອງ ອົງການໄປສະນີ ແລະ ໂທລະຄົມມະນາຄົມແຫ່ງ

ຊາດ ເພື່ອເປັນບ່ອນອີງໃນດ້ານນິຕິກຳ, ໃນການຈັດຕັ້ງ ແລະ ການເຄື່ອນໄຫວອົງການດັ່ງກ່າວ ແລະ ເພື່ອຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ, ລັດຖະບານ ແລະ ບັນດາກົດໝາຍກ່ຽວກັບວຽກງານໄປສະນີ ແລະ ໂທລະຄົມມະນາຄົມ ໃນຂອບເຂດທົ່ວປະເທດ.

**ມາດຕາ 3. ທີ່ຕັ້ງ ແລະ ພາລະບົດບາດ**

**ອົງການໄປສະນີ ແລະ ໂທລະຄົມມະນາຄົມແຫ່ງຊາດ** ຂຽນຫຍໍ້ວ່າ: "ອ.ປ.ທ", ຂຽນເປັນພາສາຝຣັ່ງ: "**Autorité Nationale des Postes et Télécommunications**" ແມ່ນທະບວງໜຶ່ງທີ່ສັງກັດຢູ່ໃນໂຄງປະກອບກົງຈັກ ຂອງ ສຳນັກງານນາຍົກລັດຖະມົນຕີ, ມີພາລະບົດບາດຄຸ້ມຄອງລັດ (ຄຸ້ມຄອງມະຫາພາກ) ດ້ານວຽກງານໄປສະນີ, ໂທລະຄົມມະນາຄົມ ແລະ ເຕັກໂນໂລຊີສື່ສານ-ຂ່າວສານ ຂອງ ຂະແໜງການໃນຂອບເຂດທົ່ວປະເທດ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 4. ໜ້າທີ່**

**4.1** ຄົ້ນຄວ້າຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ກ່ຽວກັບວຽກງານໄປສະນີ, ໂທລະຄົມມະນາຄົມ ແລະ ເຕັກໂນໂລຊີສື່ສານ-ຂ່າວສານ ໃຫ້ກາຍເປັນແຜນຍຸດທະສາດ, ແຜນການ, ແຜນງານ ແລະ ໂຄງການ ພ້ອມທັງຊີ້ນຳຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ ແລະ ມີຄຸນນະພາບສູງ;

**4.2** ອ.ປ.ທ ມີໜ້າທີ່ລວມໃນດ້ານຄຸ້ມຄອງມະຫາພາກ ຕາມນະໂຍບາຍ, ຕາມກົດໝາຍ, ຕາມດຳລັດ, ຂໍ້ຕົກລົງ ແລະ ລະບຽບການທີ່ກ່ຽວກັບວຽກງານໄປສະນີ, ການໂທລະຄົມມະນາຄົມ, ເຕັກໂນໂລຊີສື່ສານ-ຂ່າວສານ, ອຸປະກອນເຕັກນິກທີ່ສົ່ງສັນຍານ ຫຼື ກະຈາຍສັນຍານວິທະຍຸ, ຄື້ນທັງໝົດທີ່ໃຊ້ຕິດຕໍ່ໃນພາກພື້ນດິນ, ພື້ນນ້ຳ ແລະ ອາວະກາດ, ຊັບພະຍາກອນໂທລະຄົມອື່ນໆ ຕາມກົດໝາຍວ່າດ້ວຍໂທລະຄົມມະນາຄົມເຊັ່ນ: ລະຫັດໂທລະສັບ, ລະຫັດອິນເຕີເນັດທີ່ພົວພັນເຖິງການບໍລິການໂທລະຄົມມະນາຄົມແຫ່ງຊາດ, ມາດຕະຖານເຕັກນິກໂທລະຄົມມະນາຄົມ, ການ ເຊື່ອມໂຍງເຄືອຂ່າຍພາຍໃນປະເທດ ແລະ ລະຫວ່າງປະເທດ, ການບໍລິການ ແລະ ອື່ນໆ ທີ່ກ່ຽວພັນກັບວຽກງານໄປສະນີ ແລະ ໂທລະຄົມມະນາຄົມ;

**4.3** ສະເໜີລັດຖະບານພິຈາລະນາອະນຸມັດແຜນຍຸດທະສາດ, ແຜນພັດທະນາໄລຍະຍາວ, ແຜນການ 05 ປີ, ແຜນການປະຈຳປີ, ບັນດາໂຄງການກໍ່ສ້າງທີ່ສຳຄັນໃນຂົງເຂດວຽກງານໄປສະນີ, ໂທລະຄົມມະນາຄົມ ແລະ ເຕັກໂນໂລຊີສື່ສານ-ຂ່າວສານຂອງຂະແໜງການ;

**4.4** ອອກຂໍ້ຕົກລົງ, ລະບຽບການ ແລະ ແຈ້ງການ ໃນຂົງເຂດວຽກງານໄປສະນີ, ໂທລະຄົມມະນາຄົມ ແລະ ເຕັກໂນໂລຊີສື່ສານ-ຂ່າວສານຂອງຂະແໜງການ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

4.5 ຈັດຕັ້ງ ແລະ ນຳພາການປະຕິບັດລະບຽບກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາໄລຍະຍາວ, ແຜນການ 05 ປີ, ແຜນການປະຈຳປີ, ບັນດາໂຄງການກໍ່ສ້າງທີ່ສຳຄັນໃນຂົງເຂດວຽກງານໄປສະນີ, ໂທລະຄົມມະນາຄົມ ແລະ ເຕັກໂນໂລຊີສື່ສານ-ຂ່າວສານຂອງຂະແໜງການ ພາຍຫຼັງທີ່ຂັ້ນເທິງໄດ້ມີການຮັບຮອງເອົາແລ້ວ; ເຜີຍແຜ່ ແລະ ສຶກສາອົບຮົມບັນດາລະບຽບການ ແລະ ຂ່າວສານກ່ຽວກັບວຽກງານໄປສະນີ, ໂທລະຄົມມະນາຄົມ ແລະ ເຕັກໂນໂລຊີສື່ສານ-ຂ່າວສານຂອງຂະແໜງການ;

4.6 ຄຸ້ມຄອງການຕິດຕັ້ງ, ການເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມສາທາລະນະ, ເຄືອຂ່າຍຂອງຂະແໜງການສະເພາະ ແລະ ສ່ວນບຸກຄົນ ໃນກິດຈະກຳໂທລະຄົມມະນາຄົມ ແລະ ອິນເຕີເນັດ;

4.7 ດັດສົມເພື່ອໃຫ້ບັນດາເຄືອຂ່າຍໂທລະຄົມຂອງລັດ, ຂອງບັນດາບໍລິສັດບໍລິການ, ຂອງອົງການອື່ນໆ ທີ່ໄດ້ຮັບອະນຸຍາດຕາມກົດໝາຍ ຂອງ ສ.ປ.ປ. ລາວ ໃຫ້ເຊື່ອມໂຍງເຂົ້າກັນໄດ້ຢ່າງລຽນໄຫຼ ນັບທັງການເຊື່ອມຕໍ່ເຂົ້າກັນກັບລະບົບຈັກລວມໂທລະສັບ;

4.8 ຄຸ້ມຄອງເປັນເອກະພາບກ່ຽວກັບມາດຕະຖານ ແລະ ຄຸນນະພາບຂອງເຄືອຂ່າຍໄປສະນີ, ໂທລະຄົມມະນາຄົມ ແລະ ເຕັກໂນໂລຊີສື່ສານ-ຂ່າວສານຂອງຂະແໜງການ, ການກໍ່ສ້າງພື້ນຖານໂຄງລ່າງ, ຜະລິດຕະພັນ ແລະ ການບໍລິການໃນຂົງເຂດວຽກງານອົງການຮັບຜິດຊອບ;

4.9 ດັດສົມອັດຕາລາຄາຄ່າທຳນຽມພື້ນຖານດ້ານໄປສະນີ, ໂທລະຄົມມະນາຄົມ ແລະ ດ້ານໄອຊີທີຂອງຂະແໜງການ ເພື່ອໃຫ້ມີຄວາມຍຸຕິທຳໃນສັງຄົມ, ສົ່ງເສີມການລົງທຶນ ແລະ ປົກປັກຮັກສາຜົນປະໂຫຍດຂອງຜູ້ຊົມໃຊ້;

4.10 ດັດສົມແຜນພັດທະນາ ຫັນເປັນອຸດສາຫະກຳໂທລະຄົມ ແລະ ໄອຊີທີຂອງຂະແໜງການ;

4.11 ຊີ້ນຳ ແລະ ກວດກາບັນດາຫົວໜ່ວຍເສດຖະກິດ ໃນການປະຕິບັດໜ້າທີ່ບໍລິການຮັບໃຊ້ສັງຄົມ ແລະ ຮັບປະກັນຄວາມປອດໄພ, ຄວາມລັບໃນວຽກງານໄປສະນີ, ໂທລະຄົມມະນາຄົມ ແລະ ເຕັກໂນໂລຊີສື່ສານ-ຂ່າວສານຂອງຂະແໜງການ ຕາມທີ່ໄດ້ກຳນົດໃນກົດໝາຍ;

4.12 ວາງແຜນ, ຄຸ້ມຄອງ, ກຳນົດ, ແບ່ງປັນ ແລະ ອະນຸມັດຄື້ນຄວາມຖີ່ວິທະຍຸ, ຄຸ້ມຄອງການນຳໃຊ້ຄື້ນຄວາມຖີ່ວິທະຍຸ, ຄຸ້ມຄອງການຜະລິດ, ການນຳເຂົ້າ, ການສົ່ງອອກອຸປະກອນວິທະຍຸ, ການຂໍຂຶ້ນທະບຽນຄື້ນຄວາມຖີ່ວິທະຍຸ ແລະ ການໃຫ້ການປະສານງານລະຫວ່າງປະເທດ ດ້ານຄື້ນຄວາມຖີ່ວິທະຍຸ;

4.13 ອອກໃບອະນຸຍາດການບໍລິການໄປສະນີ, ການບໍລິການໂທລະຄົມ, ການບໍລິການດ້ານອິນເຕີເນັດ, ອະນຸຍາດຄື້ນຄວາມຖີ່, ລະຫັດໂທລະສັບ, ລະຫັດອິນເຕີເນັດ ແລະ ອື່ນໆ;

4.14 ເຮັດໜ້າທີ່ພົວພັນກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ໃນດ້ານໄປສະນີ ແລະ ໂທລະຄົມມະນາຄົມ;

4.15 ຄົ້ນຄວ້າຊອກຫາແຫຼ່ງທຶນທັງພາຍໃນ ແລະ ຕ່າງປະເທດ ເພື່ອປັບປຸງ ແລະ ຂະຫຍາຍຕາໜ່າງໄປສະນີ, ໂທລະຄົມມະນາຄົມ ແລະ ເຕັກໂນໂລຊີສື່ສານ-ຂ່າວສານຂອງຂະແໜງການ ຕາມການອະນຸມັດຂອງລັດຖະບານ;

4.16 ຄຸ້ມຄອງ ແລະ ປະເມີນຜົນໂຄງການລົງທຶນທີ່ສຳຄັນຂອງລັດ ໃນວຽກງານໄປສະນີ, ໂທລະຄົມມະນາຄົມ ແລະ ເຕັກໂນໂລຊີສື່ສານ-ຂ່າວສານຂອງຂະແໜງການ;

4.17 ສະຫຼຸບຕີລາຄາ ແລະ ວິໄຈການປະຕິບັດແຜນການ ແລະ ງົບປະມານ ຕາມທີ່ລັດຖະບານອະນຸມັດ;

4.18 ຄົ້ນຄວ້າ ແລະ ປະກາດໃຊ້ລະບອບວິທີເຮັດວຽກຂອງ ອ.ປ.ທ, ລະບຽບຄຸ້ມຄອງດ້ານຕ່າງໆ ລວມທັງໂຄງປະກອບການຈັດຕັ້ງ ແລະ ກຳນົດຈຳນວນພົນ ໃນຂະແໜງການຂອງຕົນ;

4.19 ຄຸ້ມຄອງ, ຝຶກອົບຮົມ, ບຳລຸງ, ກໍ່ສ້າງ, ສັບຊ້ອນ, ໝູນວຽນຕຳແໜ່ງ, ເລື່ອນຊັ້ນ-ຂັ້ນ ແລະ ປະຕິບັດນະໂຍບາຍ ຕໍ່ ພະນັກງານ-ລັດຖະກອນ ໃນຂະແໜງການຂອງຕົນ ຢ່າງຖືກຕ້ອງຕາມນະໂຍບາຍຂອງພັກ ແລະ ລັດຖະບານ;

4.20 ຄົ້ນຄວ້າ, ສົ່ງເສີມທິວຄິດປະດິດສ້າງ, ນຳໃຊ້ຄວາມກ້າວໜ້າຂອງວິທະຍາສາດ, ເຕັກໂນໂລຊີ ສື່ສານໃໝ່ ເຂົ້າໃນຂະແໜງການຕົນ;

4.21 ປະຕິບັດໜ້າທີ່ອື່ນໆ ທີ່ນາຍົກລັດຖະມົນຕີ ແລະ ລັດຖະບານມອບໝາຍໃຫ້ສະເພາະ ຕາມທີ່ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ.

**ມາດຕາ 5. ຂອບເຂດສິດ**

5.1 ສ້າງຕັ້ງ, ປັບປຸງ ຫຼື ລົບລ້າງກົງຈັກການຈັດຕັ້ງທີ່ຂຶ້ນກັບສິດຄຸ້ມຄອງຂອງຕົນ ໃນເມື່ອເຫັນວ່າບໍ່ສອດຄ່ອງ;

5.2 ອອກຂໍ້ຕົກລົງ, ຄຳສັ່ງ, ບົດແນະນຳ, ແຈ້ງການ, ກົດລະບຽບ ແລະ ມາດຕະການຕ່າງໆ ເພື່ອຄຸ້ມຄອງ ແລະ ພັດທະນາຂະແໜງການຂອງຕົນ ພ້ອມທັງໂຄສະນາເຜີຍແຜ່ໃຫ້ທຸກອົງການຈັດຕັ້ງຂອງລັດ, ຂອງສາກົນ ແລະ ປະຊາຊົນ ໄດ້ຮັບຮູ້ ແລະ ປະຕິບັດຕາມ;

5.3 ແຕ່ງຕັ້ງ, ເລື່ອນຊັ້ນ-ຂັ້ນ, ຍ້ອງຍໍ, ຍົກຍ້າຍ, ປະຕິວິໄນ, ປົດຕຳແໜ່ງ ພະນັກງານ-ລັດຖະກອນ ທີ່ຂຶ້ນກັບສິດຄຸ້ມໃຄອງຂອງຕົນ;

5.4 ພົວພັນ, ປະສານສົມທົບກັບທຸກອົງການຈັດຕັ້ງຂອງພັກ, ລັດ, ອົງການຈັດຕັ້ງສາກົນ, ຕ່າງປະເທດ ແລະ ປະຊາຊົນ ເພື່ອພ້ອມກັນປະຕິບັດນະໂຍບາຍ, ລະບຽບກົດໝາຍ, ດຳລັດ ແລະ ຄຳສັ່ງຕ່າງໆ ຂອງລັດຖະບານ;

5.5 ພົວພັນ, ເຈລະຈາ, ເຊັນສັນຍາ, ອານຸສັນຍາ ແລະ ຂໍ້ຜູກພັນຕ່າງໆ ກັບພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ຕາມການອະນຸມັດຂອງລັດຖະບານ;

5.6 ດຳເນີນການກວດກາ, ກວດການຢ່າງຮອບດ້ານ, ເປັນປະຈຳ, ປັບໃໝ ຫຼື ກ່າວຟ້ອງຜູ້ລະເມີດລະບຽບກົດໝາຍ ໃນຂົງເຂດຂະແໜງການຕົນ;

5.7 ກຳນົດ ແລະ ນຳໃຊ້ມາດຕະການປຸກລະດົມທຸກແຫຼ່ງຊັບພະຍາກອນໂທລະຄົມມະນາຄົມ ເພື່ອຮັບໃຊ້ສະຖານະການສຸກເສີນ, ເພື່ອຄວາມສະຫງົບສຸກ ແລະ ຄວາມປອດໄພຂອງຊາດ, ເພື່ອແກ້ໄຂໄພພິບັດທາງທຳມະຊາດ ຕາມການມອບສິດຂອງລັດຖະບານ ແລະ ນາຍົກລັດຖະມົນຕີ;

5.8 ພິຈາລະນາຕົກລົງກ່ຽວກັບວຽກງານສະແຕັມໄປສະນີເຊັ່ນ: ການພິມ, ການຈຳໜ່າຍ, ການເກັບກູ້ຄືນ, ການສະສົມສຳເນົາມ້ຽນ, ການທຳລາຍຖິ້ມ, ການນຳເຂົ້າ ແລະ ການສົ່ງອອກສະແຕັມໄປສະນີ ຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ;

5.9 ຄຸ້ມຄອງ, ຊີ້ນຳວຽກງານອະນຸມັດ ຫຼື ຖອນໃບຢັ້ງຢືນ, ໃບອະນຸຍາດເຄື່ອໄຫວ ໃນວຽກງານໄປສະນີ, ໂທລະຄົມມະນາຄົມ, ຄົ້ນຄວ້າຄື້ນວິທະຍຸ ແລະ ອິນເຕີເນັດ ຕາມກົດໝາຍກຳນົດ;

5.10 ພົວພັນ, ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ຕາມການອະນຸມັດ ຂອງ ລັດຖະບານ ແລະ ນາຍົກລັດຖະມົນຕີ;

5.11 ອະນຸຍາດສ້າງຕັ້ງ, ຍຸບເລີກ ຫຼື ສະເໜີອົງການຈັດຕັ້ງທີ່ມີສິດອຳນາດອະນຸຍາດສ້າງຕັ້ງ, ຍຸບເລີກ ບັນດາຫົວໜ່ວຍວິສາຫະກິດຕ່າງໆ ໃນຂະແໜງການຂອງຕົນ ຕາມທີ່ລັດຖະບານໄດ້ອະນຸມັດແລ້ວ ໃຫ້ມີປະສິດທິຜົນ;

5.12 ເຜີຍແຜ່, ໂຄສະນາຜົນສຳເລັດທາງດ້ານເສດຖະກິດ, ເຕັກນິກ, ຫົວຄິດປະດິດສ້າງ ແລະ ເຕັກໂນໂລຊີໃໝ່ ໃນຂະແໜງການຂອງຕົນ ແລະ ມີສິດປົກປ້ອງລິຂະສິດຂອງຕົນ;

5.13 ຮຽກເຊີນຜູ້ທີ່ກ່ຽວຂ້ອງ ມາປຶກສາຫາລືວຽກງານ ທີ່ກ່ຽວຂ້ອງຂະແໜງການຂອງຕົນ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

**ມາດຕາ 6. ໂຄງປະກອບກົງຈັກ**

**ກ. ກົງຈັກການຈັດຕັ້ງ ທີ່ເຮັດໜ້າທີ່ບໍລິຫານຄຸ້ມຄອງລັດຊ່ວຍຫົວໜ້າອົງການ :**

1. ຫ້ອງການ;
2. ກົມ ແຜນການ ແລະ ຮ່ວມມື;
3. ກົມ ໄປສະນີ;
4. ກົມ ໂທລະຄົມມະນາຄົມ ແລະ ອິນເຕີເນັດ.

**ຂ. ກົງຈັກການຈັດຕັ້ງ ທີ່ເຮັດໜ້າທີ່ຄົ້ນຄວ້າວິຊາການຊ່ວຍ ຫົວໜ້າອົງການອົງການ**

1. ສະຖາບັນໄປສະນີ ແລະ ໂທລະຄົມມະນາຄົມ;
2. ໃນເມື່ອມີຄວາມຈຳເປັນ ອ.ປ.ທ ສາມາດສ້າງຕັ້ງຄະນະກຳມະການໃດໜຶ່ງຂຶ້ນ ເພື່ອຮັບປະກັນໃຫ້ແກ່ການປະຕິບັດແນວທາງ, ຍຸດທະສາດ, ແຜນນະໂຍບາຍ ແລະ ພາລະໜ້າທີ່ ທີ່ສູນກາງ ແລະ ລັດຖະບານມອບໝາຍໃຫ້.

ຄ. ຂະໜາດ ແລະ ໂຄງປະກອບການຈັດຕັ້ງຢູ່ທ້ອງຖິ່ນໃຫ້ອົງການ ອ.ປ.ທ ຄົ້ນຄວ້າ ແລ້ວສົມທົບກັບອົງການທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ເພື່ອພິຈາລະນາ ຕາມຄວາມບໍ່ເໝາະສົມບົນພື້ນຖານຮັບປະກັນທິດຊີ້ນຳທີ່ວ່າ ກະທັດຮັດ, ມີປະສິດທິຜົນ ໃນການປະບັດແນວທາງ, ຍຸດທະສາດ, ແຜນນະໂຍບາຍ ແລະ ພາລະໜ້າທີ່ ທີ່ສູນກາງພັກ ແລະ ລັດຖະບານມອບໝາຍໃຫ້.

**ມາດຕາ 7. ໂຄງປະກອບບຸກຄະລາກອນ**

7.1 ອ.ປ.ທ ມີຫົວໜ້າອົງການ ແລະ ຮອງຈຳນວນໜຶ່ງ, ຫົວໜ້າອົງການ ແມ່ນລັດຖະມົນຕີ ປະຈຳ ສຳນັກງານນາຍົກລັດຖະມົນຕີ ທີ່ໄດ້ຮັບການແຕ່ງຕັ້ງຈາກນາຍົກລັດຖະມົນຕີ;

7.2 ຫົວໜ້າອົງການ ມີຄວາມຮັບຜິດຊອບຕໍ່ການຄຸ້ມຄອງ ແລະ ການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ກ່ຽວກັບວຽກງານໄປສະນີ, ໂທລະຄົມມະນາຄົມ ແລະ ເຕັກໂນໂລຊີສື່ສານ-ຂ່າວສານຂອງຂະແໜງການ. ຮັບຜິດຊອບໂດຍກົງຕໍ່ລັດຖະບານ ແລະ ນາຍົກລັດຖະມົນຕີ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງທຸກຢ່າງ ໃນຂະແໜງການຂອງຕົນ;

7.3 ໃນກໍລະນີຕິດຂັດ ຫຼື ໄປເຄື່ອນໄຫວວຽກງານທາງໄກ, ຫົວໜ້າອົງການ ອ.ປ.ທ ຕ້ອງມອບສິດເປັນລາຍລັກອັກສອນເປັນການຊົ່ວຄາວໃຫ້ຜູ້ຮອງຜູ້ໃດຜູ້ໜຶ່ງວ່າການແທນ;

7.4 ຮອງຫົວໜ້າ ອ.ປ.ທ ເປັນຜູ້ຊ່ວຍຫົວໜ້າ, ຖືກແຕ່ງຕັ້ງ, ປົດຕຳແໜ່ງໂດຍນາຍົກລັດຖະມົນຕີ ຕາມການສະເໜີ ຂອງ ຄະນະຈັດຕັ້ງສູນກາງພັກ;

7.5 ນອກຈາກນີ້ ອ.ປ.ທ ຍັງມີຫົວໜ້າ, ຮອງຫົວໜ້າຫ້ອງການ, ບັນດາຫົວໜ້າກົມ, ຮອງຫົວໜ້າກົມ, ຫົວໜ້າ, ຮອງຫົວໜ້າສະຖາບັນ, ຫົວໜ້າ, ຮອງຫົວໜ້າພະແນກ ແລະ ພະນັກງານວິຊາການ, ພະນັກງານບໍລິຫານຮັບໃຊ້ ສັງກັດໃນຫ້ອງການ, ກົມ, ພະແນກ ແລະ ໜ່ວຍງານຕ່າງໆ. ບຸກຄະລາກອນເຫຼົ່ານີ້ ໄດ້ຮັບການແຕ່ງຕັ້ງ, ເລື່ອນຊັ້ນ-ຂັ້ນເງິນເດືອນ ຕາມລະບຽບລັດຖະບານ ແລະ ຕາມກົດໝາຍກຳນົດ;

7.6 ສຳລັບຢູ່ຂັ້ນທ້ອງຖິ່ນ, ອ.ປ.ທ ມີຫົວໜ້າ, ຮອງຫົວໜ້າຫ້ອງການ ແລະ ພະນັກງານວິຊາການຈຳນວນໜຶ່ງ. ຫົວໜ້າ ອ.ປ.ທ ສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ຂອງ ສູນກາງ ເພື່ອກຳນົດໃຫ້ເໝາະສົມ ໂດຍອີງໃສ່ສະພາບ ແລະ ຈຸດພິເສດຂອງແຕ່ລະທ້ອງຖິ່ນ.

**ມາດຕາ 8. ການຜັນຂະຫຍາຍ**

ມອບໃຫ້ຫົວໜ້າ ອ.ປ.ທ ຫັນເປັນລະອຽດ ກ່ຽວກັບພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ ຂອງ ຫ້ອງການ, ບັນດາກົມ ແລະ ການຈັດຕັ້ງ ທີ່ຂຶ້ນກັບຕົນ ເພື່ອຈັດຕັ້ງປະຕິບັດວຽກງານຂອງຕົນ ໃຫ້ໄດ້ຮັບຜົນດີ, ບົນພື້ນຖານການຄົ້ນຄວ້າປະກອບຄວາມເຫັນຂອງອົງການທີ່ກ່ຽວຂ້ອງ.

## ໝວດທີ IV
## ລະບອບແບບແຜນວິທີເຮັດວຽກ

**ມາດຕາ 9. ຫຼັກການ**

**9.1** ປະຕິບັດລະບອບຫົວໜ້າດຽວ ຕາມລະບົບແບ່ງຂັ້ນຄຸ້ມຄອງບົນພື້ນຖານຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ, ຕ້ອງມີການແບ່ງງານກັນຢ່າງ ຈະແຈ້ງໃນໝູ່ຄະນະ ແລະ ໃນທຸກໆ ຂັ້ນ ພ້ອມມອບສິດອຳນາດໃນລະດັບອັນແນ່ນອນ ແລະ ສົມເຫດສົມ ໃນການແກ້ໄຂບັນຫາຕ່າງໆ ຢູ່ໃນຂອບເຂດສິດຂອງແຕ່ລະຂັ້ນ ແລະ ຂອງແຕ່ລະຄົນ;

**9.2** ການເຄື່ອນໄຫວ ແລະ ການດຳເນີນງານຂອງອົງການໆ ຕ້ອງເອົາແນວທາງຍຸດທະສາດ, ແຜນນະໂຍບາຍ ຂອງ ສູນກາງພັກ ແລະ ລັດຖະບານ ກ່ຽວກັບວຽກງານໄປສະນີ, ໂທລະຄົມມະນາຄົມ ແລະ ເຕັກໂນໂລຊີສື່ສານ-ຂ່າວສານຂອງຂະແໜງການ ເປັນທິດທາງ;

**9.3** ອີງໃສ່ແນວທາງນະໂຍບາຍ, ແຜນນະໂຍບາຍ, ອົງການຕ້ອງສ້າງແຜນການໄລຍະຍາວ ແລະ ແຜນການປະຈຳປີ ຂອງ ຂະແໜງການທີ່ຂຶ້ນນຳຕົນ ໂດຍຖືເອົາແຜນການ, ແຜນງານ ແລະ ໂຄງການດັ່ງກ່າວ ເປັນຈຸດເລີ່ມຕົ້ນ ຂອງ ການເຄື່ອນໄຫວທັງໝົດ ຂອງ ທົ່ວລະບົບໄປສະນີ, ໂທລະຄົມມະນາຄົມ ແລະ ເຕັກໂນໂລຊີສື່ສານ-ຂ່າວສານ ຂອງ ຂະແໜງການ. ທຸກໆໂຄງການ ຕ້ອງໄດ້ຮັບການສຶກສາ, ເລືອກເຟັ້ນ, ປຶກສາຫາລືຕາມຂັ້ນຕອນ ຢ່າງຖີ່ຖ້ວນ ແລະ ຮັບການອະນຸມັດຈາກຫົວໜ້າອົງການໆ ກ່ອນຈະຖືກບັນຈຸເຂົ້າໃນແຜນງານ;

**9.4** ປະຕິບັດການຄຸ້ມຄອງມະຫາພາກ ໂດຍມີການຕິດຕາມກວດກາຊຸກຍູ້ທຸກຂັ້ນ ຕໍ່ ທຸກຂະແໜງວຽກ, ທຸກຄົນໜ່ວຍວິຊາການ, ຫົວໜ່ວຍບໍລິຫານ ແລະ ທຸລະກິດທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ໃນທົ່ວປະເທດ ກ່ຽວກັບການປະຕິບັດແຜນງານ, ໂຄງການ ຂອງ ອ.ປ.ທ;

**9.5** ປະຕິບັດລະບອບປະຊຸມ, ສ່ອງແສງ, ລາຍງານ, ກວດກາຢ່າງເຂັ້ມງວດ, ເປັນຕົ້ນກອງປະຊຸມປະຈຳສັບປະດາ ຂອງ ຄະນະນຳ ອ.ປ.ທ, ໂດຍມີການເຂົ້າຮ່ວມຂອງຫົວໜ້າຫ້ອງການ, ຫົວໜ້າກົມ ແລະ ໜ່ວຍງານຕ່າງໆ. ໃນກອງປະຊຸມສ່ອງແສງລາຍງານແຕ່ລະຂັ້ນ ຕ້ອງຍົກເອົາການເຄື່ອນໄຫວ ໃນພາລະໜ້າທີ່ຂອງຂະແໜງການ ແລະ ໜ່ວຍງານຕ່າງໆ ມາສ່ອງແສງ, ສະຫຼຸບຕີລາຄາຜົນໄດ້, ຜົນເສຍ ຕ້ອງມີການບັນທຶກກອງປະຊຸມ ແລ້ວລາຍງານໃຫ້ລັດຖະບານຊາບ.

## ໝວດທີ V
## ຂໍ້ບັນຍັດສຸດທ້າຍ

**ມາດຕາ 10. ງົບປະມານ ແລະ ກາປະທັບ**

ອົງການໄປສະນີ ແລະ ໂທລະຄົມມະນາຄົມແຫ່ງຊາດ ມີງົບປະມານ ແລະ ກາປະທັບຂອງຕົນ ທີ່ລັດປະກອບໃຫ້ ເພື່ອເຄື່ອນໄຫວວຽກງານທາງລັດຖະການ ຕາມລະບຽບກົດໝາຍກຳນົດ.

**ມາດຕາ 11. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ, ອົງການໄປສະນີ ແລະ ໂທລະຄົມມະນາຄົມແຫ່ງຊາດ, ສຳນັກງານນາຍົກລັດຖະມົນຕີ, ບັນດາກະຊວງ, ອົງການທຽບເທົ່າກະຊວງ, ແຂວງ ແລະ ນະຄອນ ຈົ່ງຮັບຮູ້ ແລະ ປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

**ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ. ລາວ**

ບົວສອນ ບຸບຜາວັນ